ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ກະຊວງການເງິນ

ກົມພາສີ

ເລກທີ 0403/ກພສ.

ນະຄອນຫລວງວຽງຈັນ, ລົງວັນທີ 26 NOV 2009

# ແຈ້ງການ

*ເຖິງ*: ບັນດາຫ້ອງການພາສີປະຈຳເຂດ ແລະ ຫ້ອງການດ່ານພາສີຊາຍແດນ ໃນທົ່ວປະເທດ.

*ເລື່ອງ :* ການຍົກເວັ້ນຄ່າຊັກພິເສດຂາອອກ ສຳລັບຜະລິດຕະພັນໄມ້ສຳເລັດຮູບ.

- ອີງຕາມກົດໝາຍພາສີ ສະບັບເລກທີ 05 / ສພຊ, ລົງວັນທີ 20.05.2005.
- ອີງຕາມບົດແນະນຳລັດຖະມົນຕີ ວ່າການກະຊວງການເງິນ ສະບັບເລກທີ 230 / ກງ, ລົງວັນທີ 04.03.1995.
- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງອຸດສະຫະກຳ-ການຄ້າ ສະບັບເລກທີ 1415 / ອຄ.ກອກ ລົງວັນທີ 28.08.2008.

ຜ່ານມາ ການຄຸ້ມຄອງສົ່ງອອກໄມ້ສຳເລັດຮູບ ຂອງບັນດາດ່ານພາສີຊາຍໃນທົ່ວປະເທດ ແມ່ນຈັດຕັ້ງປະຕິບັດ ບໍ່ທັນເປັນເອກະພາບ, ໂດຍສະເພາະການເກັບຄ່າຊັກພິເສດຂາອອກ ຊຶ່ງໄດ້ສົ່ງຜົນກະທົບ ຕໍ່ນະໂຍບາຍລວມຂອງລັດຖະບານ ກ່ຽວກັບການສົ່ງເສີມການຜະລິດພາຍໃນເພື່ອການສົ່ງອອກ. ເພື່ອແກ້ໄຂບັນຫາດັ່ງກ່າວ ແນໃສ່ເຮັດໃຫ້ການຈັດຕັ້ງລະບຽບກົດໝາຍ ເປັນເອກະພາບໃນທົ່ວປະເທດ.

**ຫ້ອງການກົມພາສີ ແຈ້ງການ, ຄື :**

1. ການສົ່ງອອກຜະລິດຕະພັນໄມ້ສຳເລັດຮູບ ທີ່ກຳນົດໃນຂໍ້ຕົກລົງ ສະບັບເລກທີ 1415/ອຄ.ກອກ , ຊຶ່ງປະກອບມີ : ໄມ້ອັດ (ເລກລະຫັດ 1621), ເຄື່ອງປະກອບໃນອາຄານ (ເລກລະຫັດ 1622.2), ໄມ້ປູພື້ນ ແລະ ໄມ້ປັກເກ (ເລກລະຫັດ 1634), ພາຊະນະບັນຈຸທີ່ເຮັດດ້ວຍໄມ້ (ເລກລະຫັດ 1623), ເຄື່ອງໃຊ້ສອຍທີ່ເຮັດດ້ວຍໄມ້ (ເລກລະຫັດ 1629), ເຄື່ອງເຟີນີເຈີທີ່ເຮັດດ້ວຍໄມ້ (ເລກລະຫັດ 3100), ຜະລິດຕະພັນຈາກຕໍ່ໄມ້ ແມ່ນໃຫ້ ***ຍົກເວັ້ນຄ່າຊັກພິເສດຂາອອກ*** ຕາມທີ່ກຳນົດໄວ້ໃນບົດແນະນຳ ສະບັບເລກທີ 230/ກງ. ມາດຕາ 1.7 ຂີດໜ້າທີ 9.
2. ໃນການສົ່ງອອກຜະລິດຕະພັນໄມ້ສຳເລັດຮູບແຕ່ລະຄັ້ງ, ຕ້ອງສົ່ງອອກຜ່ານດ່ານພາສີຊາຍແດນ, ປະກອບເອກະສານໃຫ້ຄົບຖ້ວນ, ຄື :

- ໃບແຈ້ງພາສີເປັນລາຍລະອຽດ ລະບອບ 10 ( ຖ້າມາຈາກຕ່າງແຂວງ ຕ້ອງມີ ບໍ 83 ຕິດຕາມມານຳ ).
- ໃບແຈ້ງລາຄາ, ໃບຫຸ້ມຫໍ່.
- ໃບອະນຸຍາດຈາກຂະແໜງອຸດສະຫະກຳ-ການຄ້າ.
- ສຳເນົາໃບທະບຽນວິສະຫະກິດ, ອະນຸຍາດດຳເນີນທຸລະກິດຂອງບໍລິສັດສົ່ງອອກ.
- ໃບສັ່ງຊື້ສິນຄ້າ.
- ບົດບັນທຶກການກວດກາຂອງຂະແໜງອຸດສະຫະກຳ-ການຄ້າ ( ອ 5 ).
- ສັນຍາຊື້ຂາຍ.
- ໃບຮັບເງິນຄ່າພັນທະອື່ນໆຈາກຂະແໜງອາກອນ ແລະ ຊັບສິນ (ຕ້ອງແມ່ນສະບັບແທ້, ຖ້າມີ).
- ໃບຕິດຕາມການຂົນສົ່ງສິນຄ້າ.
- ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ( C.O ຖ້າມີ ).

3. ມອບໃຫ້ເຈົ້າໜ້າທີ່ພາສີປະຈຳດ່ານບ່ອນສິນຄ້າ,ເຄື່ອງຂອງສົ່ງອອກ ເອົາໃຈໃສ່ກວດກາໃຫ້ລະອຽດທາງດ້ານເອກະສານປະກອບ ຊະນິດ, ນ້ຳໜັກ, ຈຳນວນ ແລະ ບໍລິມາດ.
4. ມອບໃຫ້ຫົວໜ້າດ່ານພາສີຊາຍແດນ, ພາສີປະຈຳເຂດ ແລະ ບັນດາພະແນກການກົມພາສີ ຈົ່ງພ້ອມກັນຈັດຕັ້ງປະຕິບັດແຈ້ງການສະບັບນີ້ ຢ່າງເຂັ້ມງວດ. ໃນການຈັດຕັ້ງປະຕິບັດຕົວຈິງ ຖ້າພົບຂໍ້ຫຍຸ້ງຍາກ ໃຫ້ລາຍງານກົມພາສີ ຊາບໃນທັນທີ ເພື່ອມີທິດແກ້ໄຂ.
5. ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າກົມພາສີ,

ອາດສະພັງທອງ ສີພັນດອນ
Athsaphangthong SIPHANDONE

ນຳສົ່ງ :
- ຄະນະກົມພາສີ 1 ສະບັບ "ເພື່ອຕິດຕາມກວດກາ"
- ພະແນກການກົມພາສີ 1 ສະບັບ "ເພື່ອຈັດຕັ້ງປະຕິບັດ"
- ເກັບສຳເນົາ 1 ສະບັບ